## ບົດທີ 2

# ຂ່າວປະເສີດໂຢຮັນແລະລຳດັບເວລາ ໃນປີທີ່ພະອົງຕຽມຕົວປ່າວປະກາດ




*ມີຫຼາຍຄົນໃນພະຄຳພີທີ່ມີຊື່ໂຢຮັນ ໃນຮູບນີ້ເຫັນທັງສອງຄົນທີ່ຊື່ໂຢຮັນ ເພື່ອບໍ່ໃຫ້ທ່ານສັບສົນ ບົດທີ 2 ນີ້ ຈະສອນເລື່ອງໂຢຮັນບັບຕິສະໂຕ ແລະໂຢຮັນອັກຄະສາວົກຊຶ່ງເປັນຜູ້ບັນທຶກຂ່າວປະເສີດໂຢຮັນ.*

*"ທ່ານທີ່ຮັກໃນອົງພະເຢຊູຄຣິດ ທີ່ຈິງແລ້ວມີຫຼາຍຄົນທີ່ມີຊື່ໂຢຮັນໃນພະຄໍາພີ ແຕ່ເວລານີ້ເຮົາຈະກ່າວເຖິງສອງຄົນເທົ່ານັ້ນ ຊຶ່ງທ່ານແລກໄດ້ແກ່ໂຢຮັນບັບຕິສະໂຕ ຜູ້ຊຶ່ງພະເຈົ້າໄດ້ຊົງໃຊ້ມາກ່ອນພະເຢຊູຄຣິດ ເພື່ອທີ່ຈະຕຽມໃຈຂອງຊາວອິສະລາເອນໄວ້ໃຫ້ພ້ອມໃນການຕ້ອນຮັບເອົາພະເຢຊູຄຣິດ. (ເບິ່ງ ມັດທາຍ 3:1-11) ແລະທ່ານທີສອງກໍຄື ໂຢຮັນອັກຄະສາວົກຂອງພະເຢຊູຄຣິດ ຊຶ່ງແມ່ນທ່ານຜູ້ນີ້ແຫລະເປັນຜູ້ຂຽນພະທໍາໂຢຮັນຊຶ່ງພວກເຮົາຈະພົບຫຼາຍສິ່ງກ່ຽວກັບເວລາແຫ່ງການຕຽມຕົວໃນການປະກາດຂ່າວປະເສີດຂອງພະເຢຊູຄຣິດ."*

**1** ໃນຂ່າວປະເສີດ ມັດທາຍ ບົດ 3 ແລະ ມັດທາຍ 4:1-11

ກ. ບັນທຶກເລື່ອງສະໄໝປີໃດ ໃນຊີວິດຂອງພະເຢຊູ? ____________________

ຂ. ແຕ່ກ່ອນນັ້ນ ພະເຢຊູເຮັດອາຊີບຫຍັງ? ____________________

ຄ. ຢູ່ບ້ານໃດ? ____________________

ງ. ແຂວງໃດ? ____________________

ຈ. ພະອົງຈາກບ້ານໄປແຄມແມ່ນໍ້າໃດ? ____________________

ສ. ຢູ່ກັບໃຜ? ____________________

ຊ. ໃນສອງແຂວງໃດ? ____________________

ຍ. ຫຼາຍຄົນມາຟັງ ໂຢຮັນເທດສະໜາເລື່ອງອານາຈັກໃດ? ____________________

ດ. ຄົນສ່ວນຫຼາຍບໍ່ທັນຮູ້ຈັກພະອົງໃນສະໄໝປີໃດ? ____________________

ມັດທາຍລາຍງານເລື່ອງສາມເຫດການໃດໃນປີນັ້ນ?

ຕ. ____________________

ຖ. ____________________

ທ. ____________________

ເຫດການທັງສາມປະການນັ້ນຖືກລາຍງານໃນຂ່າວປະເສີດ 3 ເຫຼັ້ມແລກຄືຂ່າວປະເສີດໃດແດ່?

ນ. ____________________

ບ. ____________________

ປ. ____________________

ຜ. ແຕ່ໃນບົດຮຽນນີ້ເຮົາຈະຮຽນເປັນຕົ້ນຈາກເຫຼັ້ມທີ 4 ຄືເຫຼັ້ມໃດ? ____________________

ຕອບ:

**1** *ກ. ປີທີ່ຕຽມຕົວ ຂ. ຊ່າງໄມ້ ຄ. ນາຊາເລັດ ງ. ຄາລີເລ ຈ. ຢໍດາເນ*
*ສ. ໂຢຮັນບັບຕິສະໂຕ ຊ. ຢູດາ ແລະ ເປີເລຍ ຍ. ສະຫວັນ (ພະເຈາ ກໍໄດ້)*
*ດ. ປີທີ່ຕຽມຕົວ ຕ. ໂຢຮັນເທດສະໜາ ຖ. ພະເຢຊູ ຮັບບັບຕິສະມາ*
*ທ. ມາທົດລອງພະເຢຊູ ນ. ມັດທາຍ ບ. ມາລະໂກ ປ. ລູກາ ຜ. ໂຢຮັນ*

**2** ແຕ່ກ່ອນອື່ນຫມົດຈຳເປັນຕ້ອງຈຳແນກໃຫ້ດີໆລະຫວ່າງໂຢຮັນບັບຕິສະໂຕແລະໂຢຮັນຜູ້ເປັນອັກຄະສາວົກຂອງພະອົງ. ທ່ານໄດ້ຮຽນຮູ້ແລ້ວເລື່ອງເຫດການສຳຄັນໃນຊີວິດຂອງເພິ່ນອີກດ້ວຍ. ແຕ່ສ່ວນໂຢຮັນຜູ້ເປັນອັກຄະສາວົກທ່ານຍັງບໍ່ ທັນໄດ້ຮຽນເທື່ອ. ໂຢຮັນອັກຄະສາວົກຂອງພະເຢຊູນັ້ນ ເປັນນ້ອງຂອງຢາໂກໂບ ແລະເປັນເພື່ອນຂອງເປໂຕ. ໃຫ້ ທ່ານອ່ານຈາກພະຄຳພີ 8 ຂໍ້ຕໍ່ໄປນີ້: ຂໍ້ໃດທີ່ກ່າວເຖິງເລື່ອງທ່ານໂຢຮັນບັບຕິສະໂຕ ຂໍໃຫ້ທ່ານຂຽນຄຳ "ບັບຕິສະໂຕ" ຂໍ້ໃດທີ່ອ້າງເຖິງ ໂຢຮັນຜູ້ເປັນອັກຄະສາວົກຂອງພະອົງ ໃຫ້ທ່ານຂຽນຄຳ "ສາວົກ".

ກ. ມັດທາຍ 3:13-14 ________________________________

ຂ. ມັດທາຍ 4:12 ________________________________

ຄ. ມັດທາຍ 4:21 ________________________________

ງ. ມັດທາຍ 10:2 ________________________________

ຈ. ມັດທາຍ 11:2 ________________________________

ສ. ມັດທາຍ 14:3 ________________________________

ຊ. ມັດທາຍ 17:1 ________________________________

ຍ. ມັດທາຍ 21:25 ________________________________

**3** ເຮົາຮູ້ແລ້ວວ່າຜູ້ຂຽນບັນທຶກຂ່າວປະເສີດເຫຼັ້ມທີ 4 ຄື ໂຢຮັນ ນ້ອງຂອງຢາໂກໂບ. ຜູ້ບັນທຶກຂ່າວປະເສີດໂຢຮັນ ຄື ຄົນໃດ? (ເລືອກ)

ກ. ______ ໂຢຮັນບັບຕິສະໂຕ

ຂ. ______ ໂຢຮັນຜູ້ເປັນສາວົກຂອງ ພະເຢຊູ

**4** ຈົ່ງຈື່ຈຳໄວ້ດີໆ ວ່າ "ທ່ານໂຢຮັນບັບຕິສະໂຕບໍ່ໄດ້ເປັນຜູ້ຂຽນບັນທຶກຂ່າວປະເສີດໂຢຮັນ" ຖ້າດັ່ງນັ້ນແມ່ນໃຜຂຽນ ຂ່າວປະເສີດໂຢຮັນ ຊຶ່ງເປັນເຫຼັ້ມທີ 4? ____________________

ເອົາລະບັດນີ້ ພວກເຮົາຈະມາສຶກສາກ່ຽວກັບເລື່ອງຕ່າງໆ ໃນສະໄຫມປີຊົງຕົວຂອງພະເຢຊູຄຣິດໂດຍເອົາຊີວິດຂອງ ທ່ານໂຢຮັນບັບຕິສະໂຕ ເປັນຫຼັກໃນການໄຈ້ແຍກລຳດັບເຫດການຕ່າງໆ ໃນຊີວິດຂອງພະເຢຊູຄຣິດ.

ຕອບ:

**2** *"ບັບຕິສະໂຕ"* *ກ. ຂ. ຈ. ສ. ແລະ ຍ.*

*"ສາວົກ"* *ຄ. ງ. ຊ.*

**3** *ຂ.ຖືກ*

**4** *ໂຢຮັນຜູ້ເປັນອັກຄະສາວົກ*

## ຕາຕະລາງປຽບທຽບໃນຊີວິດຂອງໂຢຮັນບັບຕິສະໂຕ ກັບສະໄໝ 3 ປີທີ່ພະເຢຊູຄຣິດປ່າວປະກາດ

| | | | | |
|---|---|---|---|---|
| | 3 ປີໃນຊີວິດຂອງໂຢຮັນບັບຕິສະໂຕ | | | |
| | ໂຢຮັນເທດສະໜາ | ໂຢຮັນຖືກຄຸກ | ໂຢຮັນຖືກປະຫານຊີວິດແລ້ວ | |
| ໄວເດັກ | ສະໄໝປີຫຽມຕົວ | ສະໄໝປີທີ່ມີຊື່ສຽງດີ | ສະໄໝປີທີ່ສຳເລັດ (ຕາຍ) | ຄືນພະຊົນ |
| | 3 ປີທີ່ພະເຢຊູຄຣິດປະກາດ | | | |

**5** ກັບໄປເບິ່ງຕາຕະລາງປຽບທຽບຊີວິດຂອງໂຢຮັນບັບຕິສະໂຕ ກັບຊີວິດຂອງພະເຢຊູ.

ກ. ເມື່ອເວລາໂຢຮັນບັບຕິສະໂຕປ່າວປະກາດແລະໃຫ້ຄົນຮັບບັບຕິສະມານັ້ນ ຖືກກັບສະໄໝປີໃດໃນຊີວິດຂອງພະ ເຢຊູ.? ______________________________________

ຂ. ເມື່ອເວລາໂຢຮັນຖືກຈັບໄວ້ໃນຄຸກ ກົງກັບສະໄໝປີໃດໃນຊີວິດຂອງພະເຢຊູ? ______

ຄ. ໂຢຮັນບັບຕິສະໂຕຕາຍໃນປີໃດ? ______________________________________

**6** ຕໍ່ໄປນີ້ພວກເຮົາຈະມາສຶກສາເລື່ອງເຫດການບາງປະການທີ່ບັນທຶກຢູ່ໃນພະທຳໂຢຮັນດ້ວຍກັນ. ອ່ານພະທຳ ໂຢຮັນ 1:35-42
ໂຢຮັນ 2:1-12
ໂຢຮັນ 2:13-22

ແລ້ວຂຽນຊື່ເລື່ອງທັງສາມໃສ່ໃນບ່ອນວ່າງລຸ່ມນີ້ ໂດຍໃຫ້ຖືກຕ້ອງຕາມລຳດັບຂອງເຫດການ.

ກ. ______________________________________________________________

ຂ. ______________________________________________________________

ຄ. ______________________________________________________________

> ຝຶກ: ຈົ່ງເອົາສໍສີຂຽວຂີດເສັ້ນກ້ອງຄຳ "ສາວົກ" ໃນຫົວຂໍ້ກ່ອນ ໂຢຮັນ 1:35
> ຈົ່ງເອົາສໍສີຂຽວຂີດເສັ້ນກ້ອງຄຳ "ງານສົມລົດ" ໃນໂຢຮັນ 2:1
> ຈົ່ງເອົາສໍສີຂຽວຂີດເສັ້ນກ້ອງຄຳ "ພະວິຫານ" ໃນ ໂຢຮັນ 2:14

**7** ໃຫ້ທ່ານອ່ານ ໂຢຮັນ 1:29, 35 ແລະ 2:1 ເຫດການນັ້ນເກີດຂຶ້ນໃນ... (ຈົ່ງເລືອກ)
_____ ມື້ດຽວກັນ _____ ປີດຽວກັນ

ຕອບ:

**5** *ກ. ຫຽມຕົວ* *ຂ. ຊື່ສຽງດີ* *ຄ. ສຳເລັດ*

**6** *ກ. ສາວົກໝວດທຳອິດ* *ຂ. ງານສົມລົດທີ່ບ້ານການາ* *ຄ. ຊົງຊຳຮະພະວິຫານ*

**7** *ໃນປີດຽວກັນ*

**8** ເຮົາໄດ້ຮຽນມາເລື່ອງເຫດການ 3 ປະການຈາກ ໂຢຮັນ ບົດທີ 1 ແລະ 2 ທີ່ໄດ້ເກີດຂຶ້ນໃນປີທີ່ພະເຢຊູຕຽມຕົວ ປະກາດຄື: * ສາວົກຫມວດທຳອິດ
* ງານສົມລົດ (ແຕ່ງດອງ) ທີ່ບ້ານການາ
* ພະເຢຊູຊົງຊຳຣະພະວິຫານ.

ໃຫ້ທ່ານອ່ານ ພະທຳໂຢຮັນ 1:29 ແລະ 3:22-24 ແລ້ວຕອບຄຳຖາມລຸ່ມນີ້:

ກ. ໃນເວລານັ້ນ ໂຢຮັນບັບຕິສະໂຕກຳລັງເຮັດຫຍັງ? (ເລືອກ)

_____ ກຳລັງເທດສະຫນາ _____ ກຳລັງຢູ່ໃນຄຸກ _____ ໄດ້ຖືກປະຫານຊີວິດຕາຍແລ້ວ

ຂ. ດັ່ງນັ້ນຕາມຕາຕະລາງນັ້ນ ຖ້າໂຢຮັນບັບຕິສະໂຕເທດສະຫນາຢູ່ເຫດການໃນຂ່າວປະເສີດໂຢຮັນ ເກີດຂຶ້ນສະໄຫມ ປີໃດໃນຊີວິດຂອງພະເຢຊູ? ______________________

**9** ພະເຢຊູຊົງຊຳຣະພະວິຫານສອງເທື່ອໃນສະໄຫມປີທີ່ຕຽມຕົວ ແລະອີກເທື່ອຫນຶ່ງໃນສະໄຫມປີທີ່ສຳເລັດ. ຂ່າວປະເສີດ 3 ເຫຼັ້ມແລກລາຍງານແຕ່ສະເພາະເທື່ອສຸດທ້າຍ. ແມ່ນຂ່າວປະເສີດເຫຼັ້ມໃດທີ່ລາຍງານເລື່ອງການຊົງຊຳຣະເທື່ອ ທຳອິດໃນສະໄຫມປີທີ່ພະເຢຊູຕຽມຕົວ? ___

**10** ກ. ພະເຢຊູຊົງຊຳຣະພະວິຫານ ຈັກເທື່ອ? ________________________________

ຂ. ຂ່າວປະເສີດເຫຼັ້ມໃດທີ່ບັນທຶກເລື່ອງການຊົງຊຳຣະພະວິຫານ ຄັ້ງທຳອິດ? _________

ຄ. ການຊົງຊຳຣະເທື່ອທຳອິດເກີດຂຶ້ນສະໄຫມປີໃດ? _________________________

**11** ມີເຫດການສຳຄັນຢ່າງໃດ ໃນໂຢຮັນ ບົດ 3 (ເບິ່ງຫົວຂໍ້ ກ່ອນໂຢຮັນ 3:1)

________________________ ____________________________________

**12** ພະເຢຊູເວົ້າກັບນີໂກເດມ ໃນສະໄຫມປີໃດ? (ເບິ່ງຕາຕະລາງ ແລະອ່ານໂຢຮັນ 3:24)

____________________________________________________________

**13** ມີເຫດການສອງປະການໃດ ໃນໂຢຮັນ ບົດ 4? (ເບິ່ງຫົວຂໍ້ ກ່ອນໂຢຮັນ 4:1 ແລະ 4:43)

____________________________________________________________

ຕອບ:

**8** *ກ. ເທດສະຫນາ ຂ. ສະໄຫມປີທີ່ຕຽມຕົວ*

**9** *ໂຢຮັນ*

**10** *ກ. ສອງ ຂ. ໂຢຮັນ ຄ. ປີທີ່ຕຽມຕົວ*

**11** *ພະເຢຊູກັບນີໂກເດມ*

**12** *ປີທີ່ຕຽມຕົວ*

**13** *ພະເຢຊູກັບຍິງຊາວຊາມາເລຍ ພະເຢຊູຊົງໂຜດໃຫ້ລູກເຈົ້ານາຍຜູ້ຫນຶ່ງໃຫ້ດີ*

**14** ໃຫ້ອ່ານໂຢຮັນ 4:43 ດີໆ ຫຼັງຈາກພະເຢຊູຊົງກ່າວກັບຍິງຊາວຊາມາເລຍມາແລ້ວ ອີກດົນປານໃດພະອົງຈຶ່ງຊົງໂຜດ ລູກຊາຍເຈົ້ານາຍຜູ້ນຶ່ງໃຫ້ດີ? (ໃຫ້ຫມາຍເອົາຂໍ້ທີ່ຖືກ)

ກ. ມື້ດຽວກັນ ຂ. ປີດຽວກັນ ຄ. ຫຼາຍປີ

**15** ເຫດການສອງປະການນັ້ນເກີດຂຶ້ນໃນສະໄຫມປີໃດ? (ເບິ່ງຕາຕະລາງແລະອ່ານໂຢຮັນ 4:1)

| | |
|---|---|
| ຝຶກ: | ຈົ່ງເອົາສໍສີຂຽວຂີດກ້ອງ "ນີໂກເດມ" ໃນ ໂຢຮັນ 3:1 |
| | ຈົ່ງເອົາສໍສີຂຽວຂີດກ້ອງ "ຍິງຊາວຊາມາເລຍ" ໃນ ໂຢຮັນ 4:7 |
| | ຈົ່ງເອົາສໍສີຂຽວຂີດກ້ອງ "ລູກເຈົ້ານາຍ" ໃນ ໂຢຮັນ 4:43 |

**16** ຕັ້ງແຕ່ໂຢຮັນ ບົດ 1 ເຖິງ ບົດ 4 ເຮົາໄດ້ຮຽນເລື່ອງເຫດການ 6 ປະການມາຄື:

ສາວົກຫມວດທຳອິດ — ພະເຢຊູກັບນີໂກເດມ

ງານສົມລົດທີ່ບ້ານການາ — ພະເຢຊູກັບຍິງຊາວຊາມາເລຍ

ຊົງຊຳຣະພະວິຫານ — ຊົງໂຜດລູກຊາຍເຈົ້ານາຍ

ເຫດການ 6 ປະການນັ້ນເກີດຂຶ້ນໃນສະໄຫມປີໃດ? ____________________________

**17** ແມ່ນ 4 ບົດໃດໃນຂ່າວປະເສີດ ໂຢຮັນ ທີ່ລາຍງານເລື່ອງສະໄຫມປີທີ່ຕຽມຕົວ?

________________________ ____________________________________________

**18** ເຊັ່ນດຽວກັນໃນຫຼັກສູດນີ້ ບົດກ່ອນນັ້ນເຮົາໄດ້ຮຽນຮູ້ເລື່ອງເຫດການຂອງສະໄຫມປີທີ່ຕຽມຕົວ ຈາກຂ່າວປະເສີດ 3 ເຫຼັ້ມ ແລກຄື:

ການເທດສະຫນາຂອງໂຢຮັນບັບຕິສະໂຕ
ພະເຢຊູຊົງຮັບບັບຕິສະມາ
ມານທົດລອງພະເຢຊູ

ເຫດການສາມປະການນັ້ນເກີດຂຶ້ນຕິດຕໍ່ກັນໂດຍບໍ່ມີເວລາວ່າງ. ໃນສອງຂໍ້ພະຄຳພີຕໍ່ໄປນີ້ ແມ່ນຂໍ້ໃດທີ່ສອນວ່າ ພະເຢຊູຮັບບັບຕິສະມາແລ້ວກໍຖືກການທົດລອງທັນທີ.

______ ມັດທາຍ 4:1 ______ ມາລະໂກ 1:12

ຕອບ:

***14*** *ຂ.ຖືກ*

***15*** *ຕຽມຕົວ*

***16*** *ຕຽມຕົວ*

***17*** *ໂຢຮັນ ບົດ 1 ເຖິງ ບົດ 4*

***18*** *ມາລະໂກ 1:12*

**19** ດັ່ງນັ້ນມີຢູ່ເຫດການ 9 ປະການທີ່ປາກົດມາໃນສະໄຫມປີທີ່ພະເຢຊູຕຽມຕົວ, 3 ປະການເປັນທີ່ລາຍງານໃນຂ່າວປະ ເສີດ 3 ເຫຼັ້ມແລກ ແລະ 6 ປະການຈາກຂ່າວປະເສີດໂຢຮັນ ຄື:

| <u>ຈາກ 3 ເຫຼັ້ມແລກ:</u> | <u>ຈາກຂ່າວປະເສີດໂຢຮັນ:</u> |
|---|---|
| ການເທດສະຫນາຂອງໂຢຮັນບັບຕິສະໂຕ | ສາວົກຫມວດທຳອິດ |
| ພະເຢຊູຊົງຮັບບັບຕິສະມາ ງານ | ສົມລົດທີ່ບ້ານການາ |
| ມານທົດລອງພະເຢຊູ | ພະເຢຊູຊົງຊຳຮະພະວິຫານ |
| | ພະເຢຊູກັບນີໂກເດມ |
| | ພະເຢຊູກັບຍິງຊາວຊາມາເລຍ |
| | ຊົງໂຜດລູກຊາຍເຈົ້ານາຍໃຫ້ດີ |

ກ. ໂຢຮັນ 1:32 ອ້າງເຖິງເຫດການໃດໃນສະໄຫມປີຕຽມຕົວ? ____________________

ຂ. ພະເຢຊູຮັບບັບຕິສະມາ ກ່ອນ ຫຼືຫຼັງຈາກເຫດການ 6 ປະການໃນໂຢຮັນ ບົດ 1-4? ___

ຄ. ໃນສອງເຫດການເທິງນັ້ນ (ລະຫວ່າງຂ່າວປະເສີດ 3 ເຫຼັ້ມແລກ ແລະ ໂຢຮັນ) ແມ່ນອັນໃດເກີດຂຶ້ນກ່ອນ?____________________________________________________

**20** ຕໍ່ໄປນີ້ມີລາຍຊື່ເຫດການ 9 ປະການທີ່ເຮົາຮຽນມາໃນສະໄຫມປີທີ່ພະອົງຕຽມຕົວ.

1. ຄຳເທດສະຫນາຂອງໂຢຮັນບັບຕິສະໂຕ
2. ພະເຢຊູຮັບບັບຕິສະມາ
3. ມານທົດລອງພະເຢຊູ
4. ສາວົກຫມວດທຳອິດ
5. ງານສົມລົດທີ່ບ້ານການາ
6. ພະເຢຊູຊົງຊຳຮະພະວິຫານ
7. ພະເຢຊູກັບນີໂກເດມ
8. ພະເຢຊູກັບຍິງຊາວຊາມາເລຍ
9. ພະເຢຊູຊົງໂຜດລູກຊາຍເຈົ້ານາຍຜູ້ຫນຶ່ງໃຫ້ດີ

ກ. ມີຈັກປະການທີ່ເຫັນໃນຂ່າວປະເສີດ 3 ເຫຼັ້ມແລກ? ____________________________

ຂ. ມີຈັກປະການມາຈາກຂ່າວປະເສີດໂຢຮັນ? ____________________________________

ຄ. ແມ່ນ 3 ເຫຼັ້ມແລກ ຫຼືໂຢຮັນ ລາຍງານຫຼາຍກວ່າ? _____________________________

ງ. ເຫດການເຫຼົ່ານັ້ນຮຽງຕາມລຳດັບເວລາບໍ່? ___________________________________

**21** ເຮົາຮຽນຮູ້ແລ້ວວ່າ ໂຢຮັນບັນທຶກເຫດການ 6 ປະການຈາກສະໄຫມປີທີ່ພະເຢຊູຕຽມຕົວ. ມັດທາຍ ລາຍງານແຕ່ 3 ປະການ.

ກ. ຂ່າວປະເສີດເຫຼັ້ມໃດ ບັນທຶກປີທີ່ຕຽມຕົວໃນ ບົດ 3 ແລະ 4:11? ________________

ຂ. ຂ່າວປະເສີດເຫຼັ້ມໃດ ບັນທຶກປີທີ່ຕຽມຕົວໃນບົດ 1 ເຖິງ ບົດ 4? _________________

ຕອບ:

| | | | | |
|---|---|---|---|---|
| **19** | *ກ. ພະເຢຊູຮັບບັບຕິສະມາ* | | *ຂ. ກ່ອນ* | *ຄ. ໃນຂ່າວປະເສີດແລກ 3 ເຫຼັ້ມ* |
| **20** | *ກ. 3 ປະການ* | *ຄ. ໂຢຮັນ* | *ຂ. 6 ປະການ* | *ງ. ຮຽງຕາມລຳດັບ* |
| **21** | *ກ. ມັດທາຍ* | *ຂ. ໂຢຮັນ* | | |

**22** ຜູ້ບັນທຶກຄົນໃດ ຂຽນລາຍງານກ່ຽວກັບສະໄໝປີທີ່ຕຽມຕົວຫຼາຍກວ່າ? (ເລືອກ)

_______ ມັດທາຍ _______ ໂຢຮັນ (ຜູ້ເປັນອັກຄະສາວົກ)

**23** ຈົ່ງຮຽງລຳດັບຂອງເຫດການທັງ 9 ປະການ ໃນສະໄໝຕຽມຕົວຂອງພະເຢຊູໃຫ້ຖືກຕ້ອງຕາມລຳດັບຂອງເຫດການ. ໂດຍການໝາຍເລກລຳດັບໃສ່ໃຫ້ຖືກຕ້ອງເໝືອນເດີມ. (ຈົດເລກຈາກ 1 ຫາ 9 ຕາມລຳດັບ)

ກ. ________ ງານສົມລົດທີ່ບ້ານການາ

ຂ. ________ ພະເຢຊູກັບນີໂກເດມ

ຄ. ________ ພະເຢຊູຊົງໂຜດລູກຊາຍເຈົ້ານາຍຜູ້ໜຶ່ງໃຫ້ດີ

ງ. ________ ພະເຢຊູຊົງຮັບບັບຕິສະມາ

ຈ. ________ ພະເຢຊູຊົງຊຳລະພະວິຫານ (ຄັ້ງແລກທີ່ບັນທຶກໃນພະຄຳພີໂຢຮັນ)

ສ. ________ ພະເຢຊູກັບຍິງຊາວຊາມາເລຍ

ຊ. ________ ມານທົດລອງພະເຢຊູ

ຍ. ________ ການເທດສະໜາຂອງໂຢຮັນບັບຕິສະໂຕ

ດ. ________ ສາວົກໝວດທຳອິດ

**24** ບັນດາເລື່ອງທີ່ມີຢູ່ຂ້າງລຸ່ມນີ້: ຈົ່ງໝາຍ √ ໃສ່ຂໍ້ທີ່ເຫັນວ່າຖືກກັບເລື່ອງທີ່ເກີດຂຶ້ນໃນສະໄໝທີ່ພະເຢຊູຕຽມຕົວ ແລະໝາຍ X ໃສ່ຂໍ້ທີ່ຜິດ.

ກ. ________ ການເທດສະໜາຂອງໂຢຮັນບັບຕິສະໂຕ

ຂ. ________ ໂຢເຊັບແລະມາລີອາພາກຸມມານເດີນທາງໄປເອຢິບ

ຄ. ________ ພະເຢຊູຊົງຮັບບັບຕິສະມາ

ງ. ________ ຊົງຕັ້ງຕົ້ນເທດສະໜາຢູ່ຈ້າຍພູ

ຈ. ________ ມານທົດລອງພະເຢຊູ

ສ. ________ ສາວົກໝວດທຳອິດ

ຊ. ________ ໂຢຮັນບັບຕິສະໂຕຖືກປະຫານ

ຍ. ________ ງານສົມລົດທີ່ບ້ານການາ

ດ. ________ ເລື່ອງລູກສາວຂອງເຈົ້ານາຍຢາລີໂອ

ຕ. ________ ພະເຢຊູຊົງຊຳລະພະວິຫານ (ຄັ້ງແລກທີ່ບັນທຶກໃນ ພະທຳໂຢຮັນ)

ຕອບ:

**22** *ໂຢຮັນ (ຜູ້ເປັນອັກຄະສາວົກ)*

**23** *ກ. 5* *ຂ. 7* *ຄ. 9* *ງ. 2* *ຈ. 6* *ສ. 8* *ຊ. 3* *ຍ. 1* *ດ. 4*

**24** *ກ. ຖືກ;* *ຂ. ຜິດ;* *ຄ. ຖືກ;* *ງ. ຜິດ;* *ຈ. ຖືກ;* *ສ. ຖືກ* *ຊ. ຜິດ;* *ຍ. ຖືກ;* *ດ. ຜິດ;* *ຕ. ຖືກ;* *ຖ. ຖືກ;* *ທ. ຖືກ* *ນ. ຜິດ;* *ບ. ຖືກ*

ຖ. ________ ພະເຢຊູກັບນີໂກເດມ
ທ. ________ ພະເຢຊູກັບຍິງຊາວຊາມາເລຍ
ນ. ________ ໂຢຮັນບັບຕິສະໂຕຖືກຈັບແລະຂັງຢູ່ໃນຄຸກ
ບ. ________ ພະເຢຊູຊົງໂຜດລູກຊາຍເຈົ້ານາຍຜູ້ນຶ່ງໃຫ້ດີ

**25** ແມ່ນຂ່າວປະເສີດໂຢຮັນ ຫຼືຂ່າວປະເສີດມັດທາຍທີ່ບັນທຶກເລື່ອງຕ່າງໆ ກ່ຽວກັບສະໄຫມທີ່ພະເຢຊູຕຽມຕົວ ຫຼາຍກວ່າ ກັນ? ________________________________________

**26** ກ. ໂຢຮັນໄດ້ບັນທຶກເລື່ອງຕ່າງໆ ໃນສະໄຫມປີທີ່ຕຽມຕົວໃນບົດໃດແດ່? ____________
ຂ. ມັດທາຍໄດ້ບັນທຶກເລື່ອງຕ່າງໆ ໃນສະໄຫມປີທີ່ຕຽມຕົວໃນບົດໃດແດ່? ___________

**27** ແຕ່ບໍ່ແມ່ນພຽງແຕ່ບັນທຶກເລື່ອງຕ່າງໆ ໃນສະໄຫມປີທີ່ຕຽມຕົວຂອງພະເຢຊູ ຫຼາຍກວ່າພະຄຳພີ 3 ເຫຼັ້ມແລກຢ່າງດຽວ ເທົ່ານັ້ນ. ແຕ່ທ່ານໂຢຮັນຍັງຊ່ວຍໃຫ້ພວກເຮົາເຂົ້າໃຈເຖິງການພົວພັນລະຫວ່າງພະເຢຊູ ແລະອັກຄະສາວົກ. ຖ້າ ພວກເຮົາບໍ່ປຽບທຽບຂ່າວປະເສີດ 3 ເຫຼັ້ມແລກກັບພະທຳໂຢຮັນ ພວກເຮົາຈະເຂົ້າໃຈຢູ່ໃນຂອບເຂດຈຳກັດກ່ຽວກັບສະຖານະການພົວພັນລະຫວ່າງພະເຢຊູກັບອັກຄະສາວົກຂອງພະອົງ ແລະບາງທີພວກເຮົາອາດຈະເຂົ້າໃຈຜິດພາດກ່ຽວກັບສິ່ງນີ້ກໍອາດເປັນໄດ້.

ຕົວຢ່າງ: ຄັ້ງແລກທີ່ເຮົາພົບພະເຢຊູຢູ່ກັບເປໂຕ, ອັນເດອາ ແລະ ໂຢຮັນ (ອັກຄະສາວົກ) ກໍຄືເວລາທີ່ພວກ ຂົາເຫຼົ່ານັ້ນກຳລັງຫາປາຢູ່.

ກ. ໃຫ້ທ່ານອ່ານ ມທ 4:18-22 ເຫດການນີ້ເກີດຂຶ້ນຢູ່ໃສ? ______________________
ຂ. ໃຫ້ທ່ານອ່ານ ມທ 4:12 ເວລາເຫດການນີ້ເກີດຂຶ້ນ ໂຢຮັນບັບຕິສະໂຕຢູ່ໃສ? _______
ຄ. ປຽບທຽບກັບຕາຕະລາງ ເຫດການນີ້ເກີດຂຶ້ນໃນປີໃດ? ______________________

**28** ຖ້າພວກເຮົາຈະສຶກສາເລື່ອງພະເຢຊູເອີ້ນເອົາສາວົກຈາກຂ່າວປະເສີດ 3 ເຫຼັ້ມແລກຢ່າງດຽວເທົ່ານັ້ນ ເຮົາອາດຈະ ເຂົ້າໃຈຜິດວ່າ ພະເຢຊູເຫັນເປໂຕ ອັນເດອາ ແລະໂຢຮັນ (ອັກຄະສາວົກ) ໃນເຮືອເທື່ອທຳອິດ ໃນທັນໃດກໍເລີຍ ເອີ້ນໃຫ້ມາໃນເວລານັ້ນ. ແຕ່ຖ້າເຮົາຈະຍົກຂ່າວປະເສີດໂຢຮັນມາປຽບທຽບເຮົາເຂົ້າໃຈວ່າບໍ່ແມ່ນດັ່ງນັ້ນ.

ກ. ຕາມ ໂຢຮັນ 1:35-37 ພະເຢຊູໄດ້ສາວົກໝວດທຳອິດຈາກໃຜ? _______________
ຂ. ເລື່ອງນີ້ເກີດຂຶ້ນໃນສະໄຫມປີໃດ ໃນການປະກາດຂອງພະເຢຊູ? _______________

ຕອບ:

**25** *ໂຢຮັນ*

**26** *ກ. ໂຢຮັນ ບົດ 1 ເຖິງ ບົດ 4* *ຂ. ມັດທາຍ ບົດ 3 ເຖິງ ບົດ 4:11*

**27** *ກ. ທະເລຄາລິເລ* *ຂ. ຄຸກ* *ຄ. ສະໄຫມທີ່ພະເຢຊູມີຊື່ສຽງ*

**28** *ກ. ໂຢຮັນບັບຕິສະໂຕ* *ຂ. ຕຽມຕົວ*

**29** ໃນສະໄຫມປີຕຽມຕົວ ຕອນທີ່ພະເຢຊູຢູ່ກັບໂຢຮັນບັບຕິສະໂຕ ພະອົງໄດ້ຢູ່ກັບສາວົກຂອງໂຢຮັນບັບຕິສະໂຕດ້ວຍ. ຫຼັງຈາກນັ້ນ ພວກເຂົາໄດ້ຢູ່ໃກ້ຊິດກັບພະອົງແລະກາຍເປັນອັກຄະສາວົກທີ່ວາງໃຈເຊື່ອແລະຮັກພະອົງ. ໃນບັນດາລາຍຊື່ລຸ່ມນີ້ ຈົ່ງຫມາຍເອົາຂໍ້ທີ່ເຫັນວ່າຖືກກັບຊື່ຂອງອັກຄະສາວົກຂອງພະເຢຊູ ສອງຄົນຊຶ່ງກ່ອນຈະມາເປັນ ອັກຄະສາວົກຂອງພະເຢຊູນັ້ນເຂົາເຄີຍເປັນລູກສິດຂອງໂຢຮັນບັບຕິສະໂຕມາກ່ອນ. ອ່ານ ໂຢຮັນ 1:40-42 ໃຫ້ ຫມາຍເອົາຂໍ້ທີ່ເຫັນວ່າຖືກ

ກ. ຢູດາອິສະກາລີອົດ

ຂ. ຊີໂມນພັກຊາດນິຍົມ

ຄ. ຊີໂມນເປໂຕ

ງ. ອັນເດອາ

ຈ. ມັດທາຍ

**30** ມີລູກສິດເກົ່າຂອງໂຢຮັນບັບຕິສະໂຕຈັກຄົນຕິດຕາມພະເຢຊູໄປ ກ່ອນເຂົາຈະໄປຊອກຫາຊີໂມນເປໂຕ? (ອ່ານ ຢຮ 1:37) ________________________________________

**31** ແຕ່ຫົວທີມີລູກສິດເກົ່າຂອງໂຢຮັນບັບຕິສະໂຕສອງຄົນ ໃນສອງຄົນນັ້ນຜູ້ຫນຶ່ງຊື່ວ່າ ອັນເດອາ ແຕ່ອີກຜູ້ຫນຶ່ງບໍ່ບອກຊື່ ຕໍ່ໄປເຂົາທັງສອງໄປຫາເປໂຕ. ເຖິງພະຄຳພີບໍ່ບອກກໍຕາມ ແຕ່ເຮົາກະໄດ້ວ່າຄົນທີ່ບໍ່ບອກຊື່ນັ້ນແມ່ນ ໂຢຮັນ ຊຶ່ງເປັນ ຜູ້ຂຽນບັນທຶກພະທຳໂຢຮັນ. ດັ່ງນັ້ນມີ 3 ຄົນໃດທີ່ເຄີຍເປັນລູກສິດຂອງໂຢຮັນບັບຕິສະໂຕ ທີ່ກາຍມາເປັນລູກສິດຂອງພະເຢຊູ?

__________________ __________________ __________________

**32** ກ. ພະເຢຊູພົບສາມຄົນນັ້ນຢູ່ໃສ? (ເລືອກ)

________ ແຄມທະເລຄາລີເລ ________ ແຄມແມ່ນ້ຳຢໍດາເນ

ຂ. ພະເຢຊູພົບເຂົາເທື່ອທຳອິດໃນສະໄຫມປີໃດ? ____________________________

**33** ແມ່ນຂ່າວປະເສີດເຫຼັ້ມໃດ ທີ່ບັນທຶກເລື່ອງພະເຢຊູພົບເຂົາທັງສາມເທື່ອທຳອິດ? ________

ຕອບ:

**29** *ຄ. ແລະ ງ.ຖືກ*

**30** *ສອງຄົນ*

**31** *ອັນເດອາ ເປໂຕ ໂຢຮັນ*

**32** *ກ. ແຄມແມ່ນ້ຳຢໍດາເນ ຂ. ຕຽມຕົວ*

**33** *ໂຢຮັນ*

**34** ທັງອັນເດອາ ໂຢຮັນ ແລະລູກສິດຂອງໂຢຮັນນບັບຕິດສະໂຕອີກຄົນອື່ນໆ ໄດ້ມາເປັນສາວົກຂອງພະເຢຊູໃນສະໄໝ ປີທີ່ພະເຢຊູຕຽມຕົວ.

ກ. ສາວົກໄດ້ຢູ່ນຳພະອົງໃນງານສົມລົດນັ້ນບໍ່? (ເບິ່ງ ໂຢຮັນ 2:2) ________________

ຂ. ສາວົກຢູ່ກັບພະອົງເວລາພະອົງຊຳຮະວິຫານບໍ່? (ເບິ່ງ ຢຮ 2:17) _______________

ຄ. ສາວົກຢູ່ກັບພະອົງເວລາທີ່ພະອົງຊົງກ່າວກັບຍິງຊາວຊາມາເລຍບໍ່? (ຢຮ 4:27) _____

ງ. ພວກສາວົກໄປກັບພະເຢຊູ ບ່ອນໃດແດ່? (ຢຮ 2:12 ແລະ 3:22) ______________

ຈ. ດັ່ງນັ້ນເປັນການແນ່ນອນວ່າ ພວກສາວົກຢູ່ກັບພະອົງໃນສະໄໝປີຕຽມຕົວບໍ່? ______

**35** ຫຼັງຈາກຢູດາອິສະກາລີອົດໄດ້ທໍລະຍົດພະເຢຊູແລ້ວຂ້າຕົວເອງ, ພວກສາວົກ 11 ຄົນ ທີ່ເຫຼືອຢູ່ໄດ້ເລືອກເອົາຄົນມາ ແທນ. ໃຫ້ທ່ານເປີດອ່ານ ກຈກ 1:21-22 ຈົ່ງຄິດເຖິງເຫດການທຸກປະການໃນການຊົງເລືອກສາວົກເຫຼົ່ານັ້ນ. ທ່ານຄິດວ່າສາວົກຂອງພະເຢຊູທຸກຄົນໄດ້ຮັບບັບຕິສະມາຈາກໂຢຮັນບັບຕິສະໂຕ ບໍ່? ________________________________________

**36** ທັງອັນເດອາ ເປໂຕ ໂຢຮັນ ແລະສາວົກຄົນອື່ນໆ ນັ້ນຕິດຕາມພະອົງຢູ່ກັບພະອົງດົນປານໃດ ເຂົາຈຶ່ງປະອາຊີບຫາປາ ມາປະກາດຂ່າວປະເສີດກັບພະອົງເຕັມເວລາ? (ໃຫ້ໝາຍເອົາຂໍ້ທີ່ຖືກ)

ກ. ມື້ນຶ່ງ

ຂ. ປະມານເດືອນນຶ່ງ

ຄ. ປະມານປີນຶ່ງ

**37** ບັດນີ້ ທ່ານໄດ້ຍົກເລື່ອງສາວົກໝວດທຳອິດມາປຽບທຽບຈາກຂ່າວປະເສີດ 3 ເຫຼັ້ມແລກ ແລະຂ່າວປະເສີດໂຢຮັນ. ເພາະສະນັ້ນ ເມື່ອທ່ານອ່ານ ໃນ ມທ 4:18-22 ກ່ຽວກັບພະເຢຊູແລະສາວົກຢູ່ແຄມທະເລສາບຄາລີເລ ທ່ານໄດ້ ຮູ້ແລ້ວວ່າ:

(ຈົ່ງໝາຍເອົາຂໍ້ທີ່ເຫັນວ່າຖືກ)

ກ. ເປັນເທື່ອທຳອິດທີ່ພະເຢຊູພົບເຂົາ

ຂ. ເປັນເທື່ອທີສອງທີ່ພະເຢຊູພົບເຂົາ

ຄ. ເຂົາຢູ່ໃກ້ຊິດກັບພະອົງໄດ້ປະມານປີນຶ່ງ

ຕອບ:

**34** *ກ. ຢູ່ ຂ. ຢູ່ ຄ. ຢູ່ ງ. ກາເປນາອູມ ແຂວງຢູດາ ຈ. ແນ່ນອນ*

**35** *ຜູ້ຈະຄິດຢ່າງໃດກໍມີ ບໍ່ມີຄຳຕອບຕາຍຕົວ*

**36** *ຄ. ຖືກ*

**37** *ຄ. ຖືກ*

**38** ອີງຕາມຂ່າວປະເສີດໂຢຮັນ ເຂົາເຂົ້າໃຈແລ້ວວ່າ ພວກສາວົກເຫຼົ່ານັ້ນຕິດຕາມແລ້ວຮຽນຮູ້ຈາກພະອົງຕະຫຼອດສະໄຫມ ປີໃດ? ______________________________________
ຕໍ່ໄປເຂົາຈະປະເຮືອຫາປາຕິດຕາມພະອົງເຕັມເວລາ.

**39** ທີ່ຈິງພວກສາວົກເຫຼົ່ານັ້ນໄດ້ຮັບການຕຽມຕົວຫຼາຍກ່ອນຈະອອກໄປປ່າວປະກາດ ເຂົາໄດ້ຮຽນຮູ້ຈາກໂຢຮັນບັບຕິສະໂຕ ກ່ອນແລ້ວ ຫຼັງຈາກນັ້ນເຂົາຕິດຕາມພະເຢຊູໄປປະມານນຶ່ງປີກ່ອນຈະເຊົາຫາປາ. ທັງເປໂຕ ອັນເດອາ ແລະ ໂຢຮັນ ໄດ້ຮັບຄຳສອນຈາກສອງຄົນໃດ?
___________________________ ແລະ ____________________________

**40** ຈົ່ງກັບໄປເບິ່ງສອງຄົນຢູ່ຫນ້າປົກບົດນີ້ ຄົນໃດເປັນໂຢຮັນບັບຕິສະໂຕ ແລະຄົນໃດເປັນໂຢຮັນສາວົກ? ______________________________________________________

| |
|---|
| ກ່ອນຈະປະຊຸມທ່ານຈົ່ງອ້ອນວອນຂໍ ພະເຈົ້າ ໂຜດໃຫ້ທ່ານບໍ່ຫນ້າອາຍສະເຫນີຄວາມຄິດເຫັນຕໍ່ຫນ້າຫມູ່. |

ຈົ່ງອ່ານ 1 ເປໂຕ 3:15 ແລະ 2 ຕີໂມທຽວ 3:16-17 ຄຳຕອບຕໍ່ໄປນີ້ບໍ່ຕ້ອງຂຽນແຕ່ຄິດຊື່ໆ ເພື່ອປຶກສາກັບຫມູ່ ໃນປະຊຸມ.

1. ຖ້າເຮົາຈະຮັບໃຊ້ພະເຈົ້າ ເຮົາສົມຄວນຈະຕຽມຕົວກ່ອນບໍ່?
2. ແມ່ນເພາະເຫດໃດທີ່ເຮົາຄວນຈະຕຽມຕົວກ່ອນ?
3. ຈະວາງແຜນຕຽມຕົວຢ່າງໃດ?
4. ພວກສາວົກຮັບການຕຽມຕົວຢ່າງໃດ?

ຕອບ:

**38** *ສະໄຫມປີທີ່ຕຽມຕົວ*

**39** *ໂຢຮັນບັບຕິສະໂຕ ແລະ ພະເຢຊູ*

**40** *ຂ້າງຊ້າຍແມ່ນໂຢຮັນບັບຕິສະໂຕ ຂ້າງຂວາແມ່ນໂຢຮັນສາວົກ*